ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 73/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 24 JAN 2019

# ຂໍ້ຕົກລົງ
# ວ່າດ້ວຍມາດຕະຖານການເຂົ້າເຖິງການບໍລິການທາງການເງິນ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ສະບັບເລກທີ 348/ລບ, ລົງວັນທີ 16 ພະຈິກ 2017;
- ອີງຕາມການສະເໜີຂອງຄະນະຮັບຜິດຊອບສ້າງນິຕິກຳ ເພື່ອຜັນຂະຫຍາຍດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດມາດຕະຖານການເຂົ້າເຖິງການບໍລິການທາງການເງິນ ຂອງບ້ານ, ບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ແລະ ເມືອງ ໃນຂອບເຂດທົ່ວປະເທດ ເພື່ອຈັດຕັ້ງປະຕິບັດດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ສະບັບເລກທີ 348/ລບ, ລົງວັນທີ 16 ພະຈິກ 2017 ໃນຂະແໜງການເງິນ-ການທະນາຄານ ແນໃສ່ປະກອບສ່ວນໃນວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກໃຫ້ມີປະສິດທິຜົນ.

**ມາດຕາ 2 ການເຂົ້າເຖິງການບໍລິການທາງການເງິນ**

ການເຂົ້າເຖິງການບໍລິການທາງການເງິນ ແມ່ນການທີ່ປະຊາຊົນສາມາດນຳໃຊ້ຜະລິດຕະພັນທາງການເງິນໃດໜຶ່ງ ຂອງສະຖາບັນການເງິນ, ກອງທຶນ ຫຼື ນິຕິບຸກຄົນອື່ນ ທີ່ໃຫ້ບໍລິການທາງການເງິນໃດໜຶ່ງ ຫຼື ຊ່ອງທາງການບໍລິການຂອງສະຖາບັນການເງິນດັ່ງກ່າວ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ການບໍລິການທາງການເງິນ ໝາຍເຖິງ ການບໍລິການໃດໜຶ່ງເປັນຕົ້ນແມ່ນການຮັບຝາກ, ການປ່ອຍເງິນກູ້, ການຮັບຊວດຈໍາ, ການໃຫ້ເຊົ່າສິນເຊື່ອ, ການບໍລິການຊໍາລະ, ການແລກປ່ຽນເງິນຕາ, ການບໍລິການໂອນເງິນ ຫຼື ການປະກັນໄພ ຂອງສະຖາບັນການເງິນ, ກອງທຶນ ຫຼື ນິຕິບຸກຄົນອື່ນໆ;

2. ຄອບຄົວທີ່ເຂົ້າເຖິງການບໍລິການທາງການເງິນ ໝາຍເຖິງ ຄອບຄົວທີ່ມີສະມາຊິກສາມາດນໍາໃຊ້ການບໍລິການທາງການເງິນໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 1 ຂອງມາດຕານີ້;

3. ສະຖາບັນການເງິນ ໝາຍເຖິງ ທະນາຄານ, ສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດປະກັນໄພ, ໂຮງຊວດຈໍາ ແລະ ການຈັດຕັ້ງອື່ນ ທີ່ສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວໃຫ້ບໍລິການທາງການເງິນຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

4. ກອງທຶນ ໝາຍເຖິງ ໜ່ວຍອອມຊັບທີ່ສ້າງຕັ້ງຂຶ້ນໂດຍ ບ້ານ ຫຼື ສໍານັກງານອົງການ ເພື່ອຮັບຝາກ ແລະ ປ່ອຍເງິນກູ້ ພາຍໃນສະມາຊິກຂອງຕົນ;

5. ນິຕິບຸກຄົນທີ່ໃຫ້ບໍລິການທາງການເງິນ ໝາຍເຖິງ ໄປສະນີ, ບໍລິສັດໂທລະຄົມມະນາຄົມ, ບໍລິສັດໂອນເງິນດ່ວນ ແລະ ນິຕິບຸກຄົນອື່ນທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນກ່ຽວຂ້ອງ;

6. ຕາໜ່າງການບໍລິການ ຂອງສະຖາບັນການເງິນ ຫຼື ນິຕິບຸກຄົນອື່ນ ໝາຍເຖິງ ການໃຫ້ບໍລິການຂອງສໍານັກງານໃຫຍ່, ສາຂາ, ໜ່ວຍບໍລິການ ແລະ ຊ່ອງທາງອື່ນໆ;

7. ຊ່ອງທາງການໃຫ້ບໍລິການ ຂອງສະຖາບັນການເງິນ ໝາຍເຖິງ ຕົວແທນ, ເຄື່ອງມືເອເລັກໂຕຣນິກຕ່າງໆ ເຊັ່ນ: ໂທລະສັບມືຖື, ເຄື່ອງຮູດບັດ ແລະ ອື່ນໆ.

## ໝວດທີ 2
## ມາດຕະຖານການເຂົ້າເຖິງການບໍລິການທາງການເງິນ

**ມາດຕາ 4 ບ້ານທີ່ເຂົ້າເຖິງການບໍລິການທາງການເງິນ**

ບ້ານທີ່ຈະໄດ້ຮັບການຢັ້ງຢືນການເຂົ້າເຖິງການບໍລິການທາງການເງິນ ຕ້ອງແມ່ນບ້ານທີ່ມີຕາໜ່າງການໃຫ້ບໍລິການ ຂອງສະຖາບັນການເງິນ, ກອງທຶນ ຫຼື ນິຕິບຸກຄົນອື່ນ ທີ່ໃຫ້ບໍລິການທາງການເງິນໃດໜຶ່ງ ຫຼື ຊ່ອງທາງການບໍລິການຂອງສະຖາບັນການເງິນ ຫຼື ມີຈໍານວນຄອບຄົວພາຍໃນບ້ານດັ່ງກ່າວ ສາມາດເຂົ້າເຖິງການບໍລິການທາງການເງິນ ກວມເອົາຫ້າສິບສ່ວນຮ້ອຍຂຶ້ນໄປ.

**ມາດຕາ 5 ບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດທີ່ເຂົ້າເຖິງການບໍລິການທາງການເງິນ**

ບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ທີ່ຈະໄດ້ຮັບການຢັ້ງຢືນໃນການເຂົ້າເຖິງການບໍລິການທາງການເງິນ ຕ້ອງມີຕາໜ່າງການບໍລິການ ຂອງສະຖາບັນການເງິນ, ກອງທຶນ ຫຼື ນິຕິບຸກຄົນອື່ນທີ່ໃຫ້ບໍລິການທາງການເງິນໃດໜຶ່ງ ຫຼື ຊ່ອງທາງການບໍລິການຂອງສະຖາບັນການເງິນ ຫຼື ມີຈໍານວນຄອບຄົວພາຍໃນບ້ານໃຫຍ່ດັ່ງກ່າວ ສາມາດເຂົ້າເຖິງ ແລະ ນໍາໃຊ້ການບໍລິການທາງການເງິນ ກວມເອົາຫົກສິບສ່ວນຮ້ອຍຂຶ້ນໄປ.

**ມາດຕາ 6 ເມືອງທີ່ເຂົ້າເຖິງການບໍລິການທາງການເງິນ**

ເມືອງທີ່ຈະໄດ້ຮັບການຢັ້ງຢືນໃນການເຂົ້າເຖິງການບໍລິການທາງການເງິນ ຕ້ອງມີໜ່ວຍບໍລິການ ຂອງສະຖາບັນການເງິນ, ກອງທຶນ ຫຼື ນິຕິບຸກຄົນອື່ນ ທີ່ໃຫ້ບໍລິການທາງການເງິນໃດໜຶ່ງ ຫຼື ຊ່ອງທາງການບໍລິການ

ຂອງສະຖາບັນການເງິນ ຫຼື ມີຈຳນວນບ້ານ ທີ່ເຂົ້າເຖິງການບໍລິການທາງການເງິນກວມເຈັດສິບສ່ວນຮ້ອຍຂຶ້ນໄປ.

## ໝວດທີ 3
## ການເກັບກຳຂໍ້ມູນ, ການປະເມີນຂໍ້ມູນ ແລະ ການອອກໃບຢັ້ງຢືນ

**ມາດຕາ 7 ການເກັບກຳຂໍ້ມູນ**

ການເກັບກຳຂໍ້ມູນຂອງບ້ານ, ບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ແລະ ເມືອງ ທີ່ເຂົ້າເຖິງການບໍລິການທາງການເງິນ ສາມາດນຳໃຊ້ຂໍ້ມູນຕົວຈິງກ່ຽວກັບຕາໜ່າງການບໍລິການທາງການເງິນ ທີ່ມີຢູ່ໃນຖານຂໍ້ມູນ ຢູ່ສະຖາບັນການເງິນ ຫຼື ນິຕິບຸກຄົນ ທີ່ໃຫ້ບໍລິການທາງການເງິນໃດໜຶ່ງ ຢູ່ບ້ານ, ເມືອງ ຫຼື ຂໍ້ມູນຢູ່ທະນາຄານແຫ່ງ ສປປ ລາວ ສຳນັກງານໃຫຍ່ ແລະ ສາຂາ.

ໃນກໍລະນີທີ່ບ້ານ, ບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ຫຼື ເມືອງ ຫາກບໍ່ມີຕາໜ່າງການບໍລິການຂອງສະຖາບັນການເງິນ ຫຼື ນິຕິບຸກຄົນອື່ນທີ່ໃຫ້ບໍລິການທາງການເງິນໃດໜຶ່ງ ແມ່ນໃຫ້ເກັບກຳຂໍ້ມູນຕົວຈິງດ້ວຍການນຳໃຊ້ແບບສອບຖາມ ຫຼື ສຳພາດນຳບັນດາເປົ້າໝາຍໂດຍກົງ.

ບ້ານ, ບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ຫຼື ເມືອງ ທີ່ສະເໜີຢັ້ງຢືນການເຂົ້າເຖິງການບໍລິການທາງການເງິນ ເປັນເຈົ້າການໃນການເກັບກຳຂໍ້ມູນ ແລະ ປະເມີນຂໍ້ມູນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້. ໃນກໍລະນີຈຳເປັນສາຂາທະນາຄານແຫ່ງ ສປປ ລາວ ທີ່ຮັບຜິດຊອບຕໍ່ບ້ານ ຫຼື ເມືອງດັ່ງກ່າວ ເກັບກຳ ແລະ ປະເມີນຂໍ້ມູນໃຫ້ກໍໄດ້; ຖ້າຫາກວ່າບ້ານ ຫຼື ເມືອງທີ່ສະເໜີອອກໃບຢັ້ງຢືນການເຂົ້າເຖິງການບໍລິການທາງການເງິນໃດທີ່ຢູ່ໃນຄວາມຮັບຜິດຊອບຂອງທະນາຄານແຫ່ງ ສປປ ລາວ ສຳນັກງານໃຫຍ່ ມອບໃຫ້ຫ້ອງການທະນາຄານແຫ່ງ ສປປ ລາວ ເປັນຜູ້ເກັບກຳ ແລະ ປະເມີນຂໍ້ມູນດັ່ງກ່າວ.

**ມາດຕາ 8 ວິທີການປະເມີນຂໍ້ມູນ**

ການປະເມີນຂໍ້ມູນການເຂົ້າເຖິງການບໍລິການທາງການເງິນ ທີ່ກຳນົດໄວ້ໃນວັກທີ 2 ຂອງມາດຕາ 7 ຂ້າງເທິງໃຫ້ປະຕິບັດ ດັ່ງນີ້:

1. ບ້ານທີ່ເຂົ້າເຖິງການບໍລິການທາງການເງິນ

$$= \frac{\text{ຄອບຄົວເຂົ້າເຖິງການບໍລິການທາງການເງິນ}}{\text{ຈຳນວນຄອບຄົວທັງໝົດ}} \text{ x } 100 \geq 50\%$$

2. ບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດທີ່ເຂົ້າເຖິງການບໍລິການທາງການເງິນ

$$= \frac{\text{ຄອບຄົວເຂົ້າເຖິງການບໍລິການທາງການເງິນ}}{\text{ຈຳນວນຄອບຄົວທັງໝົດ}} \text{ x } 100 \geq 60\%$$

3. ເມືອງທີ່ເຂົ້າເຖິງການບໍລິການທາງການເງິນ

$$= \frac{\text{ບ້ານເຂົ້າເຖິງການບໍລິການທາງການເງິນ}}{\text{ຈຳນວນບ້ານທັງໝົດ}} \text{ x } 100 \geq 70\%$$

**ມາດຕາ 9 ການອອກໃບຢັ້ງຢືນ.**

ການອອກໃບຢັ້ງຢືນການເຂົ້າເຖິງການບໍລິການທາງການເງິນ ຕາມທີ່ກໍານົດໄວ້ໃນມາດຕາ 4, 5, 6 ຂອງຂໍ້ຕົກລົງສະບັບນີ້ແມ່ນບົນພື້ນຖານການສະເໜີ ຂອງອໍານາດການປົກຄອງບ້ານ ຫຼື ເມືອງທີ່ກ່ຽວຂ້ອງ ແລະ ຜ່ານການເກັບກໍາຂໍ້ມູນ ແລະ ປະເມີນຂໍ້ມູນຕົວຈິງ.

ມອບໃຫ້ຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ປະຈໍາຢູ່ທ້ອງຖິ່ນເປັນຜູ້ອອກໄປຢັ້ງຢືນການເຂົ້າເຖິງການບໍລິການທາງການເງິນຂອງບ້ານ ແລະ ເມືອງ ຢູ່ທ້ອງຖິ່ນທີ່ຕົນຮັບຜິດຊອບ. ຖ້າບ້ານ ຫຼື ເມືອງ ທີ່ຢູ່ໃນເຂດຮັບຜິດຊອບ ຂອງທະນາຄານແຫ່ງ ສປປ ລາວ ສໍານັກງານໃຫຍ່ ແມ່ນໃຫ້ຫົວໜ້າຫ້ອງການເປັນຜູ້ອອກໃບຢັ້ງຢືນ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 10 ການຈັດຕັ້ງປະຕິບັດ**

ຫ້ອງການທະນາຄານແຫ່ງ ສປປ ລາວ ແລະ ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາຢູ່ທ້ອງຖິ່ນ ເປັນຜູ້ປະສານງານກັບຂະແໜ່ງການກ່ຽວຂ້ອງ ແລະ ອໍານາດການປົກຄອງທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍການໃຫ້ຄໍາແນະນໍາວິທີການເກັບກໍາ ແລະ ປະເມີນຂໍ້ມູນດ້ວຍຊ່ອງທາງ ແລະ ວິທີການທີ່ເໝາະສົມ.

ບັນດາກົມ, ທຽບເທົ່າກົມ ແລະ ສາຂາ ຂອງທະນາຄານແຫ່ງ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ. ລາວ
ຜູ້ວ່າການ

ສອນໄຊ ສິດພະໄຊ